ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1617 /ອຄ.ທຄວ

ນະຄອນຫຼວງວຽງຈັນ, ວັນທີ 28 ສິງຫາ 2013

# ແຈ້ງການ

ເຖິງ :
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ
- ສະພາການຄ້າ ແລະ ອຸດສາຫະກຳ, ສະມາຄົມ ຫຼື ກຸ່ມທຸລະກິດ
- ວິສາຫະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດ
- ຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ

ເລື່ອງ : ແບບຟອມເອກະສານຄຳຮ້ອງ, ປຶ້ມຕິດຕາມ ແລະ ປຶ້ມລົງທະບຽນ ຕາມກົດໝາຍວ່າດ້ວຍວິສາຫະກິດ

ເພື່ອເຮັດໃຫ້ວຽກງານການຄຸ້ມຄອງວິສາຫະກິດ (ພາຍຫຼັງຂຶ້ນທະບຽນວິສາຫະກິດແລ້ວ) ເປັນລະບົບມີປະສິດທິພາບ, ມີຄວາມເປັນເອກະພາບ, ທັນສະໄໝແລະສອດຄ່ອງກັບບົດບັນຍັດຂອງກົດໝາຍວ່າດ້ວຍວິສາຫະກິດ.

ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງໃຫ້ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

ກ. ແບບຟອມຄຳຮ້ອງ, ປຶ້ມຕິດຕາມ ແລະ ປຶ້ມລົງທະບຽນ

1. ຊຸດແບບຟອມຄຳຮ້ອງສະເໜີປ່ຽນແປງເນື້ອໃນທະບຽນວິສາຫະກິດ ປະກອບດ້ວຍ:

1.1. ໃບຄຳຮ້ອງສະເໜີປ່ຽນແປງເນື້ອໃນທະບຽນວິສາຫະກິດ;

1.2. ໃບລາຍງານຜົນການຄົ້ນຄວ້າເອກະສານຄຳຮ້ອງປ່ຽນແປງເນື້ອໃນທະບຽນວິສາຫະກິດ ເພື່ອພິຈາລະນາ ເຊັນໃບທະບຽນວິສາຫະກິດໃໝ່;

1.3. ໜັງສືຮັບຮອງການປ່ຽນແປງເນື້ອໃນທະບຽນວິສາຫະກິດ (ໃນກໍລະນີທີ່ການປ່ຽນແປງເນື້ອໃນທະບຽນວິສາຫະກິດ ໃດໜຶ່ງບໍ່ມີຜົນໃຫ້ຕ້ອງປ່ຽນແປງສຳເນົາແຈ້ງຂຶ້ນທະບຽນວິສາຫະກິດ ສະບັບຕົ້ນທັງໝົດ).

2. ຊຸດແບບຟອມຄຳຮ້ອງສະເໜີປ່ຽນ ຫຼື ຂໍໃບທະບຽນວິສາຫະກິດໃໝ່ ປະກອບດ້ວຍ:

2.1. ໃບຄຳຮ້ອງສະເໜີຂໍປ່ຽນ ຫຼື ຂໍໃບທະບຽນວິສາຫະກິດໃໝ່;

2.2. ໃບລາຍງານຜົນການຄົ້ນຄວ້າເອກະສານຄຳຮ້ອງຂໍປ່ຽນ ຫຼື ຂໍໃບທະບຽນວິສາຫະກິດໃໝ່ ເພື່ອພິຈາລະນາ ເຊັນໃບທະບຽນວິສາຫະກິດໃໝ່ແທນ.

3. ຊຸດແບບຟອມຄຳຮ້ອງກ່ຽວກັບການຍຸບເລີກວິສາຫະກິດ (ສາຂາຕ່າງປະເທດ) ປະກອບດ້ວຍ:

3.1. ໃບຄຳຮ້ອງສະເໜີແຈ້ງການຍຸບເລີກວິສາຫະກິດຊົ່ວຄາວ;

3.2. ໃບຄຳຮ້ອງສະເໜີແຈ້ງຂຶ້ນທະບຽນສິ້ນສຸດການຊຳລະສະສາງ;

3.3. ໃບຄຳຮ້ອງສະເໜີແຈ້ງການຍຸບເລີກວິສາຫະກິດຖາວອນ;

3.4. ໜັງສືແຈ້ງການລຶບຊື່ວິສາຫະກິດອອກຈາກບັນຊີທະບຽນວິສາຫະກິດ.

4. ແບບຟອມປຶ້ມຕິດຕາມການປະຕິບັດ (ບາງບົດບັນຍັດສະເພາະ) ສຳລັບວິສາຫະກິດ ພາຍຫຼັງຂຶ້ນທະບຽນວິສາຫະກິດ ປະຈຳປີ ( );

5. ແບບຟອມປຶ້ມລົງທະບຽນກ່ຽວກັບການສະເໜີແຈ້ງຍຸບເລີກ (ຊົ່ວຄາວ ຫຼື ຖາວອນ) ແລະ ການສິ້ນສຸດການຊຳລະສະສາງຂອງວິສາຫະກິດ ປະຈຳປີ ( );

6. ແບບຟອມປຶ້ມລົງທະບຽນການສະເໜີແຈ້ງສ້າງຕັ້ງສາຂາຂອງວິສາຫະກິດ (ນິຕິບຸກຄົນ) ພາຍໃນປະເທດ ປະຈຳປີ ( ).

(ລາຍລະອຽດແບບຟອມເອກະສານ, ປຶ້ມຕິດຕາມ ແລະ ປຶ້ມລົງທະບຽນ ຄັດຕິດມາພ້ອມນີ້),

ຂ. ການເກັບຄ່າທຳນຽມໃຫ້ປະຕິບັດດັ່ງນີ້:

- ລົງທະບຽນສ້າງຕັ້ງສາຂາວິສາຫະກິດພາຍໃນປະເທດ - 100,000ກີບ/ ຄັ້ງ/ສາຂາ;
- ລົງທະບຽນແຈ້ງການຍຸບເລີກວິສາຫະກິດຊົ່ວຄາວ ຫຼື ຖາວອນ - 50,000ກີບ/ຄັ້ງ;
- ລົງທະບຽນແຈ້ງສິ້ນສຸດການຊຳລະສະສາງ - 50,000 ກີບ/ຄັ້ງ;
- ໜັງສືຮັບຮອງການປ່ຽນແປງເນື້ອໃນທະບຽນວິສາຫະກິດ - 30,000 ກີບ/ຄັ້ງ.

ຄ. ເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ ແລະ ເມືອງ ຕ້ອງເກັບມ້ຽນທຸກເອກະສານ ດັ່ງກ່າວມາ (ທັງ Hard & soft Copy) ຕາມລະບຽບ ກົດໝາຍທີ່ກ່ຽວຂ້ອງ.

ງ. ມອບໃຫ້ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດສືບຕໍ່ຄົ້ນຄວ້າປັບປຸງ ແບບຟອມດັ່ງກ່າວໃຫ້ມີຄວາມຮັດກຸມ ທັນສະໄໝ ໃນແຕ່ລະໄລຍະ ພ້ອມທັງເປັນເຈົ້າການຊີ້ນຳ ແລະ ກວດສອບການຈັດຕັ້ງປະຕິບັດ ຫຼື ການນຳໃຊ້ແບບຟອມ ຂອງເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ ແລະ ເມືອງຢ່າງເຂັ້ມງວດ.

ຈ. ແຈ້ງການສະບັບນີ້ ປ່ຽນແທນ ແຈ້ງການ ສະບັບເລກທີ 0537/ອຄ.ສລທ, ລົງວັນທີ 19 ມີນາ 2012, ເລື່ອງ: ແບບຟອມ ແລະ ການນຳໃຊ້ແບບຟອມ(ເອກະພາບ)ກ່ຽວກັບຄຳຮ້ອງ, ປຶ້ມຕິດຕາມ ແລະ ປຶ້ມລົງທະບຽນ ໃນກິດຈະກຳຕ່າງໆ ຕາມກົດໝາຍວ່າດ້ວຍວິສາຫະກິດ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ

ດຣ.ນາມ ວິຍະເກດ